ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ຫ້ອງວ່າການລັດຖະບານ

ເລກທີ 932 /ຫລບ.ກລຂ

ນະຄອນຫຼວງວຽງຈັນ, ວັນທີ 26.6.2013

# ແຈ້ງການ

ຮຽນ: - ທ່ານລັດຖະມົນຕີວ່າການ ກະຊວງຍຸຕິທຳ.

- ທ່ານລັດຖະມົນຕີວ່າການ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

ເລື່ອງ: ທິດຊີ້ນຳຂອງຂັ້ນເທິງ ກ່ຽວກັບການຈັດຕັ້ງປະຕິບັດ ຈົດໝາຍເຫດທາງລັດຖະການ.

- ອີງຕາມຜົນຂອງກອງປະຊຸມຮ່ວມ ລະຫວ່າງ ຫ້ອງວ່າການລັດຖະບານ ກັບພາກສ່ວນທີ່ກ່ຽວຂ້ອງ ຄັ້ງວັນທີ 05 ມິຖຸນາ 2013 ຕາມບົດລາຍງານ ສະບັບເລກທີ 408/ຫລບ.ກປພ, ລົງວັນທີ 11 ມິຖຸນາ 2013.
- ອີງຕາມການຕົກລົງ ແລະ ຊີ້ນຳ ຂອງທ່ານນາຍົກລັດຖະມົນຕີ ແລະ ທ່ານຮອງນາຍົກລັດຖະມົນຕີ, ຜູ້ຊີ້ນຳວຽກງານເສດຖະກິດ ຄັ້ງວັນທີ 17 ມິຖຸນາ 2013.

ຫ້ອງວ່າການລັດຖະບານ ຂໍຖືເປັນກຽດແຈ້ງທິດຊີ້ນຳຂອງຂັ້ນເທິງ ກ່ຽວກັບການຈັດຕັ້ງປະຕິບັດ ຈົດໝາຍເຫດທາງລັດຖະການ ມາຍັງທ່ານຊາບ ດັ່ງນີ້ :

" 1. ເພື່ອເຮັດໃຫ້ຈົດໝາຍເຫດທາງລັດຖະການ ໄດ້ຮັບການຈັດຕັ້ງປະຕິບັດຢ່າງຕໍ່ເນື່ອງ ແລະ ເປັນລະບົບ. ສະນັ້ນ, ແຕ່ນີ້ຮອດການປັບປຸງກົດໝາຍ ວ່າດ້ວຍລັດຖະບານສຳເລັດ ມອບໃຫ້ກະຊວງຍຸຕິທຳ ສືບຕໍ່ຮັບຜິດຊອບ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວຄືຜ່ານມາໄປກ່ອນ, ສ່ວນວ່າຈະມອບໃຫ້ພາກສ່ວນໃດ ເປັນຜູ້ຈັດຕັ້ງປະຕິບັດໃນຕໍ່ໜ້ານັ້ນ ໃຫ້ລໍຖ້າການປັບປຸງກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສຳເລັດກ່ອນ ລັດຖະບານ ຈຶ່ງຈະພິຈາລະນາຕາມພາຍຫລັງ.

2. ໃຫ້ກະຊວງຍຸຕິທຳ ແຕ່ງຕັ້ງໜ່ວຍງານປະສານງານ ຕາມຂອບເຂດສິດຂອງລັດຖະມົນຕີ ເພື່ອເຮັດໜ້າທີ່ໃນການປະສານງານເອົາບັນດານິຕິກຳ ແລະ ວຽກງານທີ່ຕິດພັນອື່ນໆ ກັບບັນດາກະຊວງກ່ຽວຂ້ອງ ເພື່ອມາຈັດພິມລົງໃນຈົດໝາຍເຫດທາງລັດຖະການ ໂດຍບໍ່ຈຳເປັນອອກຄຳສັ່ງ ຂອງນາຍົກລັດຖະມົນຕີອີກ ".

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ດຳເນີນການຕາມຈິດໃຈຊີ້ນຳດັ່ງກ່າວ ຕາມທາງຄວນດ້ວຍ.

ລັດຖະມົນຕີ, ຫົວໜ້າຫ້ອງວ່າການລັດຖະບານ

ດຣ. ສິນລະວົງ ຄຸດໄພທູນ

ບ່ອນນຳສົ່ງ:

| | |
|---|---|
| - ນາຍົກ-ຮອງນາຍົກລັດຖະມົນຕີ | 05 ສະບັບ |
| - ສະມາຊິກລັດຖະບານ | 01 ສະບັບ |
| - ຫ້ອງວ່າການສູນກາງພັກ | 01 ສະບັບ |
| - ຮອງຫົວໜ້າ ຫລບ ທ່ານລະ | 01 ສະບັບ |
| - ກົມປະຊາສຳພັນ ແລະ ກົມກົດໝາຍ | 01 ສະບັບ |
| - ເກັບມ້ຽນ | 08 ສະບັບ. |